ສຳນັກງານໃຫຍ່

ເລກທີ: 016 /ທຄຕລ.ສພຫ.2025
ນະຄອນຫຼວງວຽງຈັນ, ວັນທີ: 30 ເມສາ 2025

ມະຕິ
ກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2024
ວັນທີ 30/04/2025

ກອງປະຊຸມສາມັນຜູ້ຖືຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ປະຈຳປີ 2024 (ຕໍ່ໄປນີ້ຮຽກວ່າ: "ກອງປະຊຸມ") ໄດ້ຈັດຂຶ້ນໃນເວລາ 14:30-16:20 ໂມງ ຂອງວັນພຸດ, ວັນທີ 30 ເມສາ 2025 ທີ່ຫ້ອງປະຊຸມ Grandball Room, ໂຮງແຮມລາວພລາຊາ ນະຄອນຫຼວງວຽງຈັນ, ໂດຍການເປັນປະທານຂອງ ທ່ານ ປອ ອາຄົມ ປຣະເສີດ, ຮອງປະທານສະພາບໍລິຫານ ທຄຕລ ພ້ອມດ້ວຍສະມາຊິກສະພາບໍລິຫານ ທຄຕລ, ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງຈຳນວນ 43 ທ່ານ, ຜູ້ມອບສິດຈຳນວນ 231 ທ່ານ ຊຶ່ງລວມຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມກອງປະຊຸມເທົ່າກັບ 836,449,765 ຮຸ້ນ, ນັບທັງ 81,244,345 ຮຸ້ນ ທີ່ຖືກມອບສິດ, ບັນລຸອັດຕາສ່ວນ 80.535% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ ແລະ ຖືວ່າຄົບອົງປະຊຸມ ເພື່ອໃຫ້ສາມາດດຳເນີນກອງປະຊຸມໄດ້ຕາມກົດລະບຽບຂອງ ທຄຕລ ແລະ ກົດໝາຍທີ່ກ່ຽວຂ້ອງ. ສຳລັບຮຸ້ນທີ່ບໍ່ໄດ້ເຂົ້າຮ່ວມກອງປະຊຸມ ມີຈຳນວນ 202,166,735 ຮຸ້ນ ເທົ່າກັບ 19.465% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ.

ກອງປະຊຸມ ໄດ້ພິຈາລະນາ ແລະ ມີມະຕິດັ່ງນີ້:

ວາລະທີ 1: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ສະໄໝສາມັນ ທຄຕລ ປະຈຳປີ 2023

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 836,449,765 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ;
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 02: ພິຈາລະນາ ແລະ ຮັບຮອງ ບົດລາຍງານຜົນການດຳເນີນງານ ແລະ ເອກະສານລາຍງານການເງິນ ຂອງ ທຄຕລ ປະຈຳປີ 2024

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 836,449,765 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ;
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 03: ພິຈາລະນາ ແລະ ຮັບຮອງການຈັດສັນກຳໄລປະຈຳປີ 2024 ເຂົ້າຄັງຕ່າງໆ ແລະ ຈ່າຍເງິນປັນຜົນ

ກອງປະຊຸມ ໄດ້ມີມະຕິຮັບຮອງການຈັດສັນກຳໄລຫຼັງອາກອນປະຈຳປີ 2024 ເພື່ອຈ່າຍເຂົ້າຄັງຕ່າງໆຕາມລະບຽບການ ແລະ ຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນດັ່ງນີ້:

- ແບ່ງເຂົ້າຄັງສະສົມຕາມລະບຽບການ: **10%**;
- ຈ່າຍເງິນປັນຜົນ: **100 ກີບ/ຮຸ້ນ** ລວມມູນຄ່າເງິນປັນຜົນທັງໝົດ **103,861,650,000.00 ກີບ**
- ແບ່ງສ່ວນທີ່ເຫຼືອເຂົ້າຄັງຂະຫຍາຍທຸລະກິດ;
- ມື້ຈ່າຍເງິນປັນຜົນ: **14 ພຶດສະພາ 2025**.

ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-3, 223243-4, 255080-5
ແຟັກ: (856-21) 213202, 223012, 223245, Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 836,449,765 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ;
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 04: ພິຈາລະນາ ແລະ ຮັບຮອງເອົາແຜນການປະຈຳປີ 2025

ປະຊຸມໄດ້ຮັບຮອງເອົາແຜນການ ປະຈຳປີ 2025 ເຊິ່ງມີຄາດໝາຍບາງຕົວເລກສຳຄັນທຽບໃສ່ຕົວເລກການປະຕິບັດປີ 2024 ມີດັ່ງນີ້:

- **ຍອດຊັບສິນ:** ບໍ່ໜຸດ 150,620 ຕື້ກີບ ທຽບໃສ່ຈັດຕັ້ງປະຕິບັດປີ 2024 ເພີ່ມຂຶ້ນ 5.93%;
- **ຍອດເງິນຝາກ:** ບໍ່ໜຸດ 138,000 ຕື້ກີບ ທຽບໃສ່ທ້າຍປີ 2024 ເພີ່ມຂຶ້ນ 3.65%;
- **ຍອດເງິນກູ້ທັງໝົດ:** ບໍ່ໜຸດ 65,700 ຕື້ກີບ ທຽບໃສ່ທ້າຍປີ 2024 ເພີ່ມຂຶ້ນ 5.69%;
- **ໜີ້ NPL ທັງໝົດ:** ບໍ່ເກີນ 3% ຂອງຍອດເງິນກູ້ທັງໝົດ;
- **ກຳໄລສຸດທິ:** ບໍ່ໜຸດ 550 ຕື້ກີບ ທຽບໃສ່ຈັດຕັ້ງປະຕິບັດປີ 2024 ເພີ່ມຂຶ້ນ 22.34%
- ແຜນຂະຫຍາຍຕາໜ່າງບໍລິການ: ສ້າງຕັ້ງສາຂາ 01 ແຫ່ງ, ຂະຫຍາຍໜ່ວຍບໍລິການໃໝ່ 13 ແຫ່ງ ແລະ ຍົກຍ້າຍສະຖານທີ່ໜ່ວຍບໍລິການ 02 ແຫ່ງ;
- ແຜນປະກອບອັດຖຸເຕັກນິກ, ກໍ່ສ້າງ ແລະ ສ້ອມແປງ ແມ່ນຈະເນັ້ນໃສ່ສືບຕໍ່ບັນດາໂຄງການທີ່ຍັງບໍ່ສຳເລັດ, ປ່ຽນແທນສິ່ງເກົ່າທີ່ເປ່ເພ ແລະ ປະກອບເພີ່ມໃໝ່ສິ່ງທີ່ຈຳເປັນ ລວມທັງໝົດ 804.67 ຕື້ກີບ;
- ແຜນຮັບພະນັກງານໃໝ່ ຈຳນວນ 84 ຄົນ.

ກອງປະຊຸມໄດ້ມອບສິດໃຫ້ສະພາບໍລິຫານພິຈາລະນາໃນການດັດແກ້ແຜນທີ່ເຫັນວ່າມີຄວາມຈຳເປັນ.

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 836,449,765 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ;
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 05: ພິຈາລະນາ ແລະ ຮັບຮອງເອົາແຜນຍຸດທະສາດພັດທະນາ ທຄຕລ ໄລຍະ 2025-2029

ກອງປະຊຸມໄດ້ຮັບຮອງເອົາແຜນຍຸດທະສາດພັດທະນາ ທຄຕລ ໄລຍະ 2025-2029 ເພື່ອກຳນົດບັນດາທິດທາງ, ຄາດໝາຍ ແລະ ແຜນການຈັດຕັ້ງປະຕິບັດລະອຽດ ພາຍໃຕ້ວິໄສທັດ **"ເຂັ້ມແຂງ ທັນສະໄໝ ໄດ້ມາດຕະຖານສາກົນ"**.

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 836,449,765 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ;
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 06: ພິຈາລະນາ ແລະ ຮັບຮອງເອົາຜູ້ກວດສອບອິດສະລະປະຈຳປີ 2025.

ກອງປະຊຸມໄດ້ຮັບຮອງເອົາບໍລິສັດ PwC ເປັນຜູ້ດຳເນີນການກວດສອບເອກະສານລາຍງານການເງິນ ປະຈຳປີ 2025 ແລະ ອອກບົດລາຍງານໃຫ້ ທຄຕລ 05 ບົດຄື:

1) ບົດລາຍງານການກວດສອບເອກະສານລາຍງານການເງິນ ຕາມມາດຕະຖານລາວ (LAS);
2) ບົດລາຍງານການກວດສອບເອກະສານລາຍງານການເງິນ ຕາມມາດຕະຖານສາກົນ (IFRS special purpose);
3) ຈົດໝາຍຄຸ້ມຄອງເຖິງຜູ້ບໍລິຫານ (Management Letter);
4) ບົດລາຍງານທົບທວນຄືນຜົນການດຳເນີນງານ (Operational review report);
5) ບົດລາຍງານການທົບທວນຄືນຖານະເງິນກູ້ (Loan review report).

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 836,449,765 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ;
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 07: ພິຈາລະນາ ແລະ ຮັບຮອງ ການແຕ່ງຕັ້ງ ປະທານ ແລະ ສະມາຊິກສະພາບໍລິຫານ ທຄຕລ ປ່ຽນແທນ ທ່ານສະມາຊິກເດີມທີ່ພົ້ນຈາກໜ້າທີ່ ແລະ ຮັບຮອງອາຍຸການຂອງສະພາບໍລິຫານ

ກອງປະຊຸມໄດ້ຮັບຮອງການແຕ່ງຕັ້ງ **ທ່ານ ສຸລິວັດ ສຸວັນນະຈຸມຄຳ** ເປັນປະທານ ສະພາບໍລິຫານ ທຄຕລ, ເພື່ອປ່ຽນແທນ **ທ່ານ ບຸນປອນ ວັນນະຈິດ** ແລະ ຮັບຮອງການແຕ່ງຕັ້ງທ່ານ **Arnaud DELAUNAY** ເປັນ ກຳມະການ ສະພາບໍລິຫານ ທຄຕລ ເພື່ອປ່ຽນແທນທ່ານ **Stephane MANGIAVACCA** ເຊິ່ງເຮັດໃຫ້ສະມາຊິກ ສະພາບໍລິຫານ ທຄຕລ ຊຸດໃໝ່ນີ້ປະກອບມີດັ່ງນີ້:

1. ທ່ານ ສຸລິວັດ ສຸວັນນະຈຸມຄຳ	ຮອງລັດຖະມົນຕີກະຊວງການເງິນ, ປະທານສະພາບໍລິຫານ
2. ທ່ານ ປອ. ອາຄົມ ປະເສີດ	ກຳມະການອິດສະລະ, ຮອງປະທານສະພາບໍລິຫານ
3. ທ່ານ ນ. ສາຍສະໝອນ ຈັນທະຈັກ	ຜູ້ອຳນວຍການ ທຄຕລ, ກຳມະການ
4. ທ່ານ ປະສົມເພັດ ຄຳຕັນ	ຮອງຫົວໜ້າກົມປະຕິຮູບລັດວິສາຫະກິດແລະປະກັນໄພ, ກຳມະການ
5. ທ່ານ Arnaud DELAUNAY	ຕົວແທນຄູ່ຮ່ວມຍຸດທະສາດ, ກຳມະການ
6. ທ່ານ ຣສ. ທອງເພັດ ຈັນທະນີວົງ	ກຳມະການອິດສະລະ, ກຳມະການ
7. ທ່ານ ນ. ລັດດາວັນ ຊົງວິໄລ	ກຳມະການອິດສະລະ, ກຳມະການ
8. ທ່ານ ສອນໄຊ ສີລາເພັດ	ກຳມະການອິດສະລະ, ກຳມະການ

ສະພາບໍລິຫານຊຸດນີ້ ມີອາຍຸການ 01 ປີ ນັບຈາກກອງປະຊຸມຜູ້ຖືຮຸ້ນຄັ້ງນີ້ເປັນຕົ້ນໄປ.

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 836,449,765 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ;
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 08: ພິຈາລະນາ ແລະ ຮັບຮອງ ການເພີ່ມທຶນຈົດທະບຽນຂອງ ທຄຕລ

ກອງປະຊຸມໄດ້ຮັບຮອງແຜນການເພີ່ມທຶນຂອງ ທຄຕລ ບໍ່ຕ່ຳກວ່າ **800** ຕື້ກີບ, ອະນຸມັດໃຫ້ ທຄຕລ ດຳເນີນຂັ້ນຕອນຕ່າງໆທີ່ຈຳເປັນ ແລະ ມອບສິດໃຫ້ສະພາບໍລິຫານໃນທຸກບັນຫາ ທີ່ຕິດພັນກັບການດຳເນີນການເພີ່ມທຶນຈົດທະບຽນໃຫ້ສຳເລັດ ແລ້ວລາຍງານໃຫ້ຜູ້ຖືຮຸ້ນຮັບຊາບໃນກອງປະຊຸມຄັ້ງຕໍ່ໄປ.

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 836,379,765 ສຽງ, ທຽບເທົ່າກັບ 3/3 ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ເທົ່າກັບ 80.528% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ;
- ບໍ່ເຫັນດີຈຳນວນ: 70,000 ສຽງ, ທຽບເທົ່າກັບ 0/3 ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ທຽບເທົ່າກັບ 0.007% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ.

ວາລະທີ 09: ພິຈາລະນາ ແລະ ຮັບຮອງ ການຂາຍຮຸ້ນທີ່ ທຄຕລ ຖືຄອງຢູ່ທະນາຄານລາວ-ຝຣັ່ງຈຳກັດ

ກອງປະຊຸມໄດ້ອະນຸມັດໃຫ້ ທຄຕລ ດຳເນີນຂັ້ນຕອນຕ່າງໆທີ່ຈຳເປັນ ເພື່ອເຮັດໃຫ້ສຳເລັດການຂາຍຮຸ້ນທັງໝົດທີ່ ທຄຕລ ຖືຄອງຢູ່ທະນາຄານລາວ-ຝຣັ່ງຈຳກັດ ບົນພື້ນຖານຜົນປະໂຫຍດສູງສຸດຂອງຜູ້ຖືຮຸ້ນ ໂດຍມອບສິດໃຫ້ສະພາບໍລິຫານໃນທຸກບັນຫາທີ່ຕິດພັນກັບການຂາຍຮຸ້ນດັ່ງກ່າວໃຫ້ສຳເລັດ ແລ້ວລາຍງານໃຫ້ຜູ້ຖືຮຸ້ນຮັບຊາບໃນກອງປະຊຸມຄັ້ງຕໍ່ໄປ.

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 836,419,765 ສຽງ, ທຽບເທົ່າກັບ 3/3 ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ເທົ່າກັບ 80.532% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ;
- ບໍ່ເຫັນດີຈຳນວນ: 30,000 ສຽງ, ທຽບເທົ່າກັບ 0/3 ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ທຽບເທົ່າກັບ 0.003% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ.

ວາລະທີ 10: ພິຈາລະນາ ແລະ ຮັບຮອງ ການຂາຍຮຸ້ນທີ່ ທຄຕລ ຖືຄອງຢູ່ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ

ກອງປະຊຸມໄດ້ອະນຸມັດໃຫ້ ທຄຕລ ດຳເນີນຂັ້ນຕອນທີ່ຈຳເປັນ ເພື່ອເຮັດໃຫ້ສຳເລັດການຂາຍຮຸ້ນທັງໝົດທີ່ ທຄຕລ ຖືຄອງຢູ່ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ ບົນພື້ນຖານຜົນປະໂຫຍດສູງສຸດຂອງຜູ້ຖືຮຸ້ນ ໂດຍມອບສິດໃຫ້ສະພາບໍລິຫານໃນທຸກບັນຫາ ທີ່ຕິດພັນກັບການຂາຍຮຸ້ນດັ່ງກ່າວໃຫ້ສຳເລັດ ແລ້ວລາຍງານໃຫ້ຜູ້ຖືຮຸ້ນຮັບຊາບໃນກອງປະຊຸມຄັ້ງຕໍ່ໄປ.

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 836,327,065 ສຽງ, ທຽບເທົ່າກັບ 3/3 ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ເທົ່າກັບ 80.523% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ;
- ບໍ່ເຫັນດີຈຳນວນ: 122,700 ສຽງ, ທຽບເທົ່າກັບ 0/3% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ທຽບເທົ່າກັບ 0.012% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ.

ປະທານກອງປະຊຸມ

ປອ. ອາຄົມ ປຣະເສີດ